# ສົ່ງເສີມການປູກ ຫມາກກ້ວຍທະນີ (ກ້ວຍນ້ຳ)



## ຄຳແນະນຳ

ກ້ວຍທະນີ(ກ້ວຍນ້ຳ) ແມ່ນຫມາກໄມ້ຊະນິດຫນຶ່ງທີ່ມີການປູກຫລາຍຢູ່ໃນທ້ອງຖິ່ນປະເທດລາວ ແຕ່ເຫນືອເຖິງໃຕ້ ແລະ ມີຄວາມນິຍົມໃນການບໍລິໂພກກັນຫລາຍ, ເນື່ອງຈາກວ່າກ້ວຍທະນີເປັນຫມາກກ້ວຍທີ່ມີລົດຊາດແຊບບໍລິໂພກງ່າຍ ແລະ ມີວິຕາມິນສູງສຳຫລັບບຳລຸງຮ່າງກາຍຊ່ວຍໃຫ້ມີການລະບາຍງ່າຍບໍ່ວ່າເດັກນ້ອຍ ຫລື ຄົນສູງອາຍຸກໍ່ບໍລິໂພກຫລັງຮັບປະທານອາຫານໃນແຕ່ລະວັນ.

**ເຕັກນິກວິທີການປູກກ້ວຍທະນີພັນພື້ນເມືອງ**

### 1. ການຄັດເລືອກພື້ນທີ່ປູກ

ຄວນເລືອກເອົາສະຖານທີ່ຮາບພຽງດີເປັນບ່ອນທີ່ລະບາຍນ້ຳໄດ້ດີ ( ນ້ຳບໍ່ຂັງ )ເປັນດິນທີ່ມີຄວາມອຸດົມສົມບູນດີສົມຄວນ ຫຼື ເປັນດິນຄ່ອຍຊັນກໍ່ໄດ້ແຕ່ບໍ່ໃຫ້ເກີນ 45 ອົງສາ ,ເປັນດິນ ຜຸຜຸຍລະບາຍນ້ຳໄດ້ດີ.ໄລຍະຫ່າງການປູກແມ່ນ 5ແມັດx 5 ແມັດ, ໃນເນື້ອທີ່ 1 ຮຕ ສາມາດປູກໄດ້ 400 ຕົ້ນ.

### 2. ເຕັກນິກການປູກມີ 2 ວິທີ

### ກ. ການປູກດ້ວຍໜໍ່

ຄັດເລືອກເອົາໜໍ່ອອກໃໝ່ (ອາຍຸແຕ່ 4 - 6 ເດືອນ) ກຳລັງຂະຫຍາຍຕົວ, ເອົາໜໍ່ໃຫ່ຍງາມ ບໍ່ຄວນເລືອກເອົາຈາກຕົ້ນກ້ວຍທີ່ໃກ້ຈະສຸດໂຊມ.



### ຂ.ການປູກດ້ວຍເຫງົ້າ

- ປູກກ້ວຍດ້ວຍເຫົ້ງາ, ໜຶ່ງເຫົ້ງາມັນສາມາດແຕກຕາ 4-7 ໜໍ່ຕໍ່ເຫົ້ງາ, ບໍ່ສິ້ນເປືອງແນວພັນ, ບໍ່ໄດ້ໄປຊອກຫາແນວພັນບ່ອນອື່ນໆມາປູກ ແລະການປົວລະບັກຮັກສາກໍ່ງ່າຍຂຶ້ນ.

**ການອະນາໄມ ກະຕຽມສະຖານທີ່ປູກ.**

- ການປູກກ້ວຍໃນສະຖານທີ່ໃດໜຶ່ງຈະຕ້ອງໄດ້ຖາກຖາງອະນາໄມພື້ນທີ່,ລ້ອມຮົ້ວລະອຽດສົມຄວນແລ້ວຈຶ່ງ ວັດແທກໄລຍະຫ່າງລະຫວ່າງແຖວ ແລະຂຸມປູກ



- ການຂຸດຂຸມປູກ ແມ່ນໃຫ້ ເລິກປະມານ 30x30x30 ຊັງຕີແມັດ ແລະ ຈຶ່ງໃຫ້ເອົາເຫົ້ງາກ້ວຍລົງຂຸມ ໃນການເອົາລົງຂຸມນັ້ນໃຫ້ເອົາທາງປາຍກ້ວຍລົງ ແລະການຖົມດິນລົງຂຸມ ແມ່ນ ໃຫ້ຂຸດເອົາດິນບ່ອນອື່ນມາຖົມ ປະສົມກັບດິນທີ່ເຮົາຂຸດຂຸມກ້ວຍກ່ອນນັ້ນມາຖົມໃຫ້ເຕັມ.

**ລະດູການປູກ**

- ຕ້ອງປູກກ່ອນບຸນປີໃໝ່ລາວ ເດືອນເມສາ (4) ຫຼື ກ່ອນລະດູຝົນ, ຖ້າຝົນຕົກຫຼາຍຈະພາໃຫ້ປາຍໜໍ່ກ້ວຍເນົ່າ.

**ການບົວລະບັດຮັກສາ**

- ການບົວລະບັດຮັກສາສວນປູກກວ້ຍຈະຕ້ອງໄດ້ອະນາໄມ ເສຍຫຍ້າ,ຖາກຖາງ 2 -3 ເທື່ອຕໍ່ປີ. ຕັດສ້ອມໃບກົກຂອງຕົ້ນກວ້ຍທີ່ມີສີເຫຼືອງແກ່ອອກໃນທຸກໆຕົ້ນ. ເພື່ອຫຼີກເວັ້ນການລີ່ຊ້ອນຂອງສັດຕູພືດ



**ຜົນການຜະລິດ**

ການສົ່ງເສີມການປູກຫມາກກ້ວຍໄດ້ຈັດຕັ້ງປະຕິບັດ ຢູ່ 64 ຄອບຄົວ 8ບ້ານ ເມືອງ ພູກູດ ໃນເນື້ອທີ່ 20 ເຮັກຕາ, 5,073 ສູມ, 30,438 ຕົ້ນ, ຜົນຜະລິດ 15,219 ເຄືອ ລາຍຮັບສະເລັ່ຍ 149,253,000 ກີບ (ຂໍ້ມູນປີ 2018)




**ການຕະຫລາດ**

- ສາມາດສົ່ງອອກຈຳຫນ່າຍຢູ່ຕະຫລາດໂພນສະຫວັນ ແລະ ທີ່ວຽງຈັນ
- ລາຄາຊື້-ຂາຍ ຢູບ້ານ 10,000-12,000 ກີບ/ເຄືອ , ສ່ວນລາຄາຂາຍຢູ່ຕະຫລາດໂພນສະຫວັນ ແມ່ນ 15,000-20,000 ກີບ / ເຄືອ




## ໂອກາດ

- ສາມາດ ຂະຫຍາຍການຜະລິດອອກໄປສູ່ບ້ານອື່ນ ຫລື ເມືອງອື່ນ ໃຫ້ກວ້າງອອກ ເນື່ອງຈາກວ່ານອກຈາກເມືອງພູກູດແລ້ວ ສະພາບດິນຟ້າອາກາດ ແລະ ດິນຢູ່ ເມືອງອື່ນໆ ໃນແຂວງຊຽງຂວາງມີຄວາມອຸດົມສົມບູນ ແລະ ເຫມາະສົມກັບການປູກ ຫມາກກ້ວຍພື້ນເມືອງ ເຊັ່ນ: ເມືອງຄຳ, ເມືອງຫນອງແຮດ, ເມືອງຜາໄຊ ແລະ ເມືອງຫມອກ

